ອົງການຈັດຕັ້ງສັງຄົມລາວ

Lao Civil Society Organization



# ແຜນງານ 5 ປີ ຂອງອົງການຈັດຕັ້ງສັງຄົມລາວ

# ( 2023 - 2027 )

# ສາລະບານ

ພວກເຮົາແມ່ນໃຜ

ວິໄສທັດ ແລະ ຄຳຂວັນ

ພາລະກິດ

ຄຸນຄ່າ

ເປົ້າໝາຍ

ແຜນງານ 5 ປີ ( 2023 - 2027 ) ຂອງອົງການຈັດຕັ້ງສັງຄົມລາວ

ກຸ່ມວິຊາການດ້ານການສຶກສາ

ກຸ່ມວິຊາການດ້ານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ກຸ່ມວິຊາການດ້ານ ການປົກຄອງ

ກຸ່ມວິຊາການດ້ານ ສາທາລະນະສຸກ

ກຸ່ມວິຊາການດ້ານ ແຮງງານ, ຄວາມພິການ ແລະ ການປົກປ້ອງທາງສັງຄົມ

ກຸ່ມວິຊາການດ້ານ ເສດຖະກິດ, ວັດທະນະທຳ ແລະ ສັງຄົມ

ກຸ່ມວິຊາການດ້ານ ສິ່ງແວດລ້ອມ

# ອົງການຈັດຕັ້ງສັງຄົມລາວ

“ ແຜນງານ 5 ປີຂອງອົງການຈັດຕັ້ງສັງຄົມລາວ ສະທ້ອນໃຫ້ເຫັນເຖິງໜ້າທີ່ ພາລະບົດບາດ ແລະ ພັນທະຂອງຂອງອົງການຈັດຕັ້ງທາງສັງຄົມລາວ ເພື່ອ ອໍານວຍຄວາມສະດວກໃນການປະສານງານ ແລະ ການເກັບກໍາຂໍ້ມູນເພື່ອ ແລກປ່ຽນຂໍ້ມູນຂ່າວສານໃຫ້ແກ່ອົງການຈັດຕັ້ງທາງສັງຄົມລາວ, ເພື່ອປະກອບ ສ່ວນໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນ ແຕ່ລະໄລຍະ ແລະ ເພື່ອໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງໃນປີ 2030 ບົນພື້ນຖານ, ປະສົບການ ແລະ ຄວາມມຸ່ງຫວັງຂອງອົງການຈັດຕັ້ງ ສັງຄົມລາວ ໃນການປະກອບສ່ວນພັດທະນາປະເທດຊາດໃຫ້ຫຼຸດພົ້ນຈາກ ປະເທດດ້ອຍພັດທະນາ, ສ້າງຊຸມຊົນ ແລະ ສັງຄົມໃຫ້ມີຄວາມຜາສຸກ.



ດຣ ນາງ ຈັນສີ ພິມພະຈັນ
ປະທານ ຄະນະກໍາມະການປະສານງານ
ອົງການຈັດຕັ້ງສັງຄົມລາວ

# ອົງການຈັດຕັ້ງສັງຄົມລາວ





## 1. ພວກເຮົາແມ່ນໃຜ

ພວກເຮົາແມ່ນອົງການຈັດຕັ້ງສັງຄົມລາວ ທີ່ມີສ່ວນຮ່ວມຢ່າງຕັ້ງໜ້າໃນການປະກອບສ່ວນເຂົ້າໃນວຽກງານພັດທະນາ ແລະ ການເປັນຄູ່ຮ່ວມງານທີ່ດີກັບບັນດາຄູ່ຮ່ວມພັດທະນາທັງພາຍໃນ ແລະ ສາກົນ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງໃນແຕ່ລະໄລຍະ

# ອົງການຈັດຕັ້ງສັງຄົມລາວ





## 2. ວິໄສທັດ

ອົງການຈັດຕັ້ງສັງຄົມ ມີຄວາມສາມັກຄີ ແລະ ເປັນຄູ່ຮ່ວມງານທີ່ດີກັບທຸກພາກສ່ວນທັງພາຍໃນ ແລະ ສາກົນ ໃນການປະກອບສ່ວນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ

## 3. ຄຳຂວັນ

ພ້ອມກັນກ້າວໄປ Together for Development

# ອົງການຈັດຕັ້ງສັງຄົມລາວ





## 5. ພາລະກິດ

- ເຕົ້າໂຮມຄວາມສາມັກຄີ ບັນດາອົງການຈັດຕັ້ງສັງຄົມລາວ
- ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດແຕ່ລະໄລຍະ, ເປົ້າໝາຍການພັດທະນາແບບຍືນຍົງ ແລະ ຖະແຫຼງການສາກົນທີ່ລັດໄດ້ໃຫ້ສັດຕະຍາບັນ
- ປະສານງານ, ແລກປ່ຽນບົດຮຽນ - ປະສົບການ ແລະ ນະວັດຕະກຳໃໝ່, ຂໍ້ມູນຂ່າວສານ, ລາຍງານ ແລະ ເຜີຍ ແຜ່ຜົນສຳເລັດໃນການປະກອບສ່ວນຂອງອົງການຈັດຕັ້ງສັງຄົມ

# ອົງການຈັດຕັ້ງສັງຄົມລາວ





## 6. ຄຸນຄ່າ

**ສາມັກຄີ** : ອົງການຈັດຕັ້ງສັງຄົມລາວ ເຮັດວຽກປະສານສົມທົບກັນດ້ວຍຄວາມສາມັກຄີ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ

**ມີສ່ວນຮ່ວມ** : ທຸກພາກສ່ວນມີສ່ວນຮ່ວມຢ່າງຕັ້ງໜ້າ ແລະ ພ້ອມກັນກ້າວໄປ

**ສະເໝີພາບ** : ມີຄວາມເທົ່າທຽມ, ນັບຖື, ໃຫ້ກຽດ ແລະ ຮັບຟັງເຊິ່ງກັນ ແລະ ກັນ

**ໂປ່ງໃສ** : ເຮັດວຽກທີ່ມີຄວາມສັດຊື່, ມີການຮ່ວມມື ແລະ ການປະສານງານທີ່ດີ

**ຫົວຄິດປະດິດສ້າງ**: ເຮັດວຽກທີ່ເນັ້ນຄວາມກ້າວໜ້າທາງດ້ານນະວັດຕະກຳໃໝ່ໂດຍແທດເໝາະກັບແຜນວຽກພັດທະນາເສດຖະກິດຂອງແຕ່ລະທ້ອງຖິ່ນຢ່າງມີປະສິດທິພາບ ແລະ ປະສິດທິຜົນ

# ອົງການຈັດຕັ້ງສັງຄົມລາວ






## 7. ເປົ້າໝາຍ

- ເປັນສູນກາງຂໍ້ມູນຂ່າວສານຂອງອົງການຈັດຕັ້ງທາງສັງຄົມລາວ
- ສ້າງກົນໄກການປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານທີ່ມີປະສິດທິພາບ ແລະ ມີປະສິດທິຜົນ
- ສົ່ງເສີມ ແລະ ເຜີຍແຜ່ຜົນສຳເລັດຂອງການປະກອບສ່ວນວຽກງານພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດຂອງອົງການຈັດຕັ້ງສັງຄົມລາວ



## 8. ແຜນງານ 5 ປີ ( 2023 - 2027 ) ຂອງອົງການຈັດຕັ້ງສັງຄົມລາວ

### ແຜນດຳເນີນງານທີ 01:

ເຊື່ອມສານ ແລະ ລວມສູນຂໍ້ມູນຂ່າວສານ, ການເຄື່ອນໄຫວ ແລະ ຜົນງານການປະກອບສ່ວນເຂົ້າໃນການພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ ແລະ ການພັດທະນາສີຂຽວ ແລະ ຍືນຍົງໃນລະດັບພາກພື້ນ ແລະ ສາກົນຂອງອົງການຈັດຕັ້ງສັງຄົມລາວ.



### ແຜນດຳເນີນງານທີ 02:

ພັດທະນານັກວິຊາການຊຳນານງານຕາມຂະແໜງການພັດທະນາເສດຖະ ກິດ - ສັງຄົມຂອງຊຸມຊົນ ແລະ ການພັດທະນາຊົນນະບົດໃຫ້ເປັນມືອາຊີບ ພ້ອມທັງພັດທະນາອົງການຈັດຕັ້ງສັງຄົມລາວໃຫ້ເປັນໜ່ວຍງານວິຊາສະເພາະຕາມຂະແໜງການບູລິມະສິດຂອງຕົນ.

### ແຜນດຳເນີນງານທີ 03:

ກຳນົດກົນໄກການປະສານງານຂອງຫ້ອງການປະສານງານອົງການຈັດຕັ້ງສັງຄົມລາວໃຫ້ມີປະສິດທິພາບ ມີປະສິດທິຜົນ ວ່ອງໄວ ແລະ ຖືກຕ້ອງແມ່ນຢຳ.

4 ມີການສຶກສາ
ທີ່ມີຄຸນນະພາບ



# ກຸ່ມວິຊາການດ້ານການສຶກສາ

1. ສ້າງຄວາມສາມາດໃຫ້ອົງການຈັດຕັ້ງສັງຄົມລາວໃນຂະແໜງການສຶກສາ
2. ຮ່ວມສ້າງ, ປັບປຸງນະໂຍບາຍ ແລະ ນິຕິກຳໃນຂະແໜງການສຶກສາ
3. ໂຄສະນາ ແລະ ເຜີຍແຜ່ວຽກງານຜົນສຳເລັດຂອງອົງການຈັດຕັ້ງສັງຄົມລາວໃນຂະແໜງສຶກສາ





# ຈຸດປະສົງ

- ເພື່ອຍົກລະດັບບົດບາດຂອງອົງການຈັດຕັ້ງສັງຄົມລາວທີ່ເຮັດວຽກໃນຂະແໜງ ການສຶກສາ
- ເພື່ອເຕົ້າໂຮມ ແລະ ເສີມສ້າງຄວາມອາດສາມາດດ້ານວິຊາການຂອງອົງການຈັດຕັ້ງສັງຄົມ ລາວຢູ່ໃນຂະແໜງສຶກສາ
- ເພື່ອເສີມສ້າງ ຄວາມສາມັກຄີ ການແລກປ່ຽນຂໍ້ມູນຂ່າວສານ ການແບ່ງປັນປະສົບ ການ ແລະ ການສະໜັບສະໜູນເຊິ່ງກັນແລະກັນລະຫວ່າງອົງການຈັດຕັ້ງສັງ ຄົມລາວ ພາກລັດ ແລະ ຄູ່ຮ່ວມພັດທະນາທີ່ເຮັດວຽກໃນຂະແໜງສຶກສາ.

# ແຜນງານ

1. **ສ້າງຄວາມສາມາດໃຫ້ອົງການຈັດຕັ້ງທາງສັງຄົມລາວໃນຂະແໜງການສຶກສາ**
   - ຮ່ວມສ້າງ/ປັບປຸງ ແຜນຍຸດທະສາດ 2021-2025 ຂອງອົງການຈັດຕັ້ງສັງຄົມລາວ ໃນຂະແໜງສຶກສາ
   - ສ້າງບົດສະເໜີໂຄງການຮ່ວມກັນເພື່ອເປັນຕົວແບບໃນການປະກອບສ່ວນວຽກງານ ສຶກສາ
   - ຖອດຖອນບົດຮຽນກ່ຽວກັບການເຮັດວຽກຂອງໜ່ວຍງານສຶກສາ (ວິທີການຈັດຕັ້ງ ປະຕິບັດ, ການລະດົມທຶນ, ການປະສານງານ ກັບ ຜູ້ປົກຄອງ, ພາກລັດ ແລະ ຄູ່ ຮ່ວມພັດ ທະນາອື່ນໆ
   - ພັດທະນາ ແລະ ອົບຮົມກ່ຽວກັບວຽກງານຂໍການສະໜັບສະໜູນວຽກງານນະໂຍ ບາຍ ໃຫ້ກັບອົງການຈັດຕັ້ງສັງຄົມລາວໃນຂະແໜງສຶກສາ
   - ສ້າງເວທີແລກປ່ຽນໃນຂັ້ນທ້ອງຖິ່ນ, ຂັ້ນແຂວງ ແລະ ຂັ້ນສູນກາງກ່ຽວກັບວຽກງານ ການສຶກສາ ແລະ ການເສື່ອມສານວຽກງານອື່ນທີ່ກ່ຽວຂ້ອງ.
2. **ຮ່ວມສ້າງ ແລະ ປັບປຸງນະໂຍບາຍ ແລະ ນິຕິກຳໃນຂະແໜງການສຶກສາ**
   - ລາຍງານຜົນສຳເລັດໃນການປະກອບສ່ວນວຽກງານສຶກສາຂອງອົງການຈັດຕັ້ງສັງຄົມລາວໃຫ້ກັບຂະແໜງການທີ່ກ່ຽວຂ້ອງ
   - ສ້າງບົດສະເໜີຂໍການສະໜັບສະໜູນທາງດ້ານນະໂຍບາຍ, ວິຊາການ ແລະ ການເງິນ
   - ເຂົ້າຮ່ວມກອງປະຊຸມສຳຄັນຂອງຂະແໜງການສຶກສາ ແລະ ຂອງຄູ່ຮ່ວມພັດທະນາເພື່ອປະກອບສ່ວນຄຳຄິດເຫັນ ແລະ ຮ່ວມປັບປຸງນະໂຍບາຍກ່ຽວກັບການສຶກສາ
3. **ໂຄສະນາ ແລະ ເຜີຍແຜ່ວຽກງານ ຜົນສຳເລັດຂອງອົງການຈັດຕັ້ງສັງຄົມລາວໃນຂະແໜງສຶກສາ**
   - ຈັດງານຕະຫຼາດນັດການສຶກສາ ເພື່ອສິ່ງເສີມການຮຽນ-ການສອນວາງສະແດງຄູ່ມື ແລະ ເຄື່ອງມືການສຶກສາຮ່ວມກັບພາກສ່ວນທີ່ເຮັດວຽກໃນຂະແໜງການສຶກສາ
   - ເຂົ້າຮ່ວມງານ Lao CSOs Fair ແລະ ງານສຳຄັນຕ່າງໆຂອງຂະແໜງການ
   - ເຂົ້າຮ່ວມກອງປະຊຸມ ແລະ ເວທີສຳຄັນຕ່າງໆທີ່ກ່ຽວຂ້ອງກັບວຽກງານສຶກສາ ໃນລະດັບທ້ອງຖິ່ນພາຍໃນ ແລະ ລະດັບສາກົນ
   - ເຜີຍແຜ່ຜົນສຳເລັດປະຈຳປີຂອງອົງການຈັດຕັ້ງສັງຄົມລາວທີ່ເຮັດວຽກໃນຂະແໜງການສຶກສາໃຫ້ຄູ່ຮ່ວມງານພາກລັດ ອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ກ່ຽວ ຂ້ອງຮັບຮູ້.



2 ລຶບລ້າງ ຄວາມອຶດຫິວ

## ກຸ່ມວິຊາການດ້ານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

- ສ້າງຄວາມສາມາດໃຫ້ອົງການຈັດຕັ້ງສັງຄົມລາວທີ່ເຮັດວຽກກ່ຽວຂ້ອງກັບ ຂະແໜງການກະສິກຳ-ປ່າໄມ້ ແລະ ພັດທະນາຊົນນະບົດ
- ປະສານງານຮ່ວມມືກັບພາກລັດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ
- ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບວຽກງານ ແລະ ຜົນສຳເລັດຂອງຂະແໜງການ



# ຈຸດປະສົງ

- ເພື່ອແລກປ່ຽນຂໍ້ມູນຂ່າວສານ, ປະສົບການ ແລະ ການສະໜັບສະໜູນ ດ້ານວິຊາການ ລະຫວ່າງອົງການຈັດຕັ້ງ ສັງຄົມລາວດ້ວຍກັນ ແລະ ເພີ່ມຄວາມ ສາມັກຄີໃຫ້ດີຂຶ້ນ.
- ເພື່ອເປັນຈຸດປະສານງານ ແລະ ສູນ ລວມຂໍ້ມູນຂ່າວສານກ່ຽວກັບວຽກງານ ກະສິກຳ-ປ່າໄມ້ ແລະ ພັດທະນາ ຊົນນະບົດ.
- ເພື່ອເປັນຕົວແທນຂອງກຸ່ມວິຊາການ ດ້ານກະສິກຳ-ປ່າໄມ້ ແລະ ພັດທະນາ ຊົນນະບົດ ເຂົ້າຮ່ວມເວທີຂອງພາກລັດ ແລະ ອົງການຈັດຕັ້ງຕ່າງໆໃນລະດັບ ຊາດ, ພາກພື້ນ ແລະ ສາກົນ.



# ແຜນງານ

1. **ສ້າງຄວາມສາມາດໃຫ້ອົງການຈັດຕັ້ງສັງຄົມລາວທີ່ເຮັດວຽກກ່ຽວຂ້ອງກັບຂະແໜງ ການກະສິກຳ-ປ່າໄມ້ ແລະ ພັດທະນາຊົນນະບົດ**

- ສ້າງເວທີແລກປ່ຽນຂໍ້ມູນຂ່າວສານກ່ຽວກັບວຽກງານ ແລະ ການພັດທະນາໃນຂະ ແໜງກະສິກຳ-ປ່າໄມ້ ແລະ ພັດທະນາຊົນນະບົດ ລະຫວ່າງອົງການຈັດຕັ້ງສັງຄົມ ລາວ, ພາກລັດ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນທີ່ກ່ຽວຂ້ອງ
- ຂົນຂວາຍຊອກຫາແຫຼ່ງທຶນປະກອບສ່ວນເຂົ້າໃນການພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ກັບບັນດາອົງການຈັດຕັ້ງສາກົນ ແລະ ໂຄງການພັດທະນາທີ່ກ່ຽວຂ້ອງ
- ພັດທະນາຄວາມສາມາດໃຫ້ອົງການຈັດຕັ້ງສັງຄົມລາວທີ່ເຮັດວຽກໃນຂະແໜງກະ ສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ທາງດ້ານວິຊາການ ແລະ ການຄຸ້ມຄອງ ບໍລິຫານໂຄງການ.

2. **ປະສານງານ ແລະ ຮ່ວມມືກັບພາກລັດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ**

- ຮ່ວມມື ແລະ ປະສານສົມທົບກັບພາກລັດ, ອົງການຈັດຕັ້ງສັງຄົມລາວ, ອົງການຈັດ ຕັ້ງສາກົນ ແລະ ຜູ້ໃຫ້ທຶນ ໃນການພັດທະນາວຽກງານໃນຂະແໜງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
- ປະກອບສ່ວນເຂົາໃນແຜນງານຫຼຸດຜ່ອນ ແລະ ລຶບລ້າງຄວາມທຸກຍາກໃນກຸ່ມຊາວຊົນນະບົດທີ່ທຳມາຫາກິນໃນຂະ ແໜງການກະສິກຳ ແລະ ປ່າໄມ້
- ສັງລວມຂໍ້ມູນຂ່າວສານວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດຂອງ ອົງການຈັດຕັ້ງສັງຄົມລາວ ແລະ ພັດທະນາຕໍ່ຍອດໃຫ້ເກີດນະວັດຕະກຳໃໝ່
- ສ້າງກຸ່ມ, ກົນໄກ ແລະ ລະບົບແລກປ່ຽນຂໍ້ມູນຂ່າວສານໃນວຽກງານການພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

3. **ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບວຽກງານ ແລະ ຜົນສຳເລັດຂອງຂະແໜງການ**

- ເຂົ້າຮ່ວມກອງປະຊຸມກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນ
- ເຂົ້າຮ່ວມງານວາງສະແດງຜະລິດຕະພັນກະສິກຳ-ປ່າໄມ້ ແລະ ງານວາງສະແດງ ທີ່ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກໃນລະດັບ ປະເທດ, ພາກພື້ນ ແລະ ສາກົນ

Zero Hunger



16 ມີສັນຕິພາບ, ຄວາມ ຍຸຕິທຳ & ສະຖາບັນ ທີ່ເຂັ້ມແຂງ

## ກຸ່ມວິຊາການດ້ານ ການປົກຄອງທີ່ ດີ

- ສ້າງຄວາມສາມາດໃຫ້ອົງການຈັດຕັ້ງສັງຄົມລາວ
- ເພີ່ມທະວີການປະສານງານ ແລະ ການຮ່ວມມືກັບຄູ່ຮ່ວມງານ
- ຍົກລະດັບວຽກງານວິຊາການ ແລະ ການຊອກຫາແຫຼ່ງທຶນ




## ຈຸດປະສົງ

- ເພື່ອເຜີຍແຜ່ ແລະຕິດຕາມການຈັດຕັ້ງປະຕິບັດກົດໝາຍແລະ ໃຫ້ປະຊາຊົນບັນດາເຜົ່າໄດ້ ຮັບການປົກປ້ອງ ແລະ ຄຸ້ມຄອງຢ່າງເປັນທຳ
- ເພື່ອສະໜອງຂໍ້ມູນ, ອະທິບາຍ, ຊີ້ແຈງໃຫ້ຄຳແນະນຳໃຫ້ແກ່ ສະມາຊິກ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ເປົ້າໝາຍການພັດທະນາ ແບບຍືນຍົງ ແລະສົນທິສັນຍາສາກົນທີ່ລັດຖະບານລາວໄດ້ໃຫ້ສັດຕະຍາບັນ
- ເພື່ອເຂົ້າຮ່ວມໃນການຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ການປະເມີນຕົວຊີ້ວັດເປົ້າໝາຍການພັດທະນາແບບຍືນຍົງ.



# ແຜນງານ

**1. ສ້າງຄວາມອາດສາມາດໃຫ້ອົງການຈັດຕັ້ງສັງຄົມລາວ**

- ສ້າງເວທີແລກປ່ຽນຮຽນຮູ້ ແລະ ປຶກສາຫາລືຮ່ວມກັບພາກສ່ວນມີສ່ວນຮ່ວມ ໃຫ້ມີ ຫຼາຍໂຄງການຈັດຕັ້ງປະຕິບັດຢູ່ທົ່ວປະເທດ ແລະ ເຂົ້າເຖິງກຸ່ມທີ່ດ້ອຍໂອກາດທາງສັງຄົມ
- ສົ່ງເສີມຄວາມຮູ້ຄວາມສາມາດແກ່ນັກພັດທະນາໜຸ່ມນ້ອຍ ແລະ ຜູ້ສືບທອດ

**2. ເພີ່ມທະວີການປະສານງານ ແລະ ການຮ່ວມມືກັບຄູ່ຮ່ວມງານ**

- ສ້າງກົນໄກການຮ່ວມມື, ການແລກປ່ຽນຂໍ້ມູນຂ່າວສານ ແລະ ການຊ່ວຍເຫລືອຊຶ່ງ ກັນ ແລະ ກັນ
- ປັບປຸງການປະສານງານແຕ່ລະຂັ້ນ ແລະ ສ້າງຈຸດປະສານງານເພື່ອໃຫ້ ໄດ້ແລກປ່ຽນ ແລະ ເຂົ້າເຖິງຂໍ້ມູນໄດ້ສະດວກ
- ສົ່ງເສີມອົງການຈັດຕັ້ງສັງຄົມລາວປະອບສ່ວນວຽກງານພັດທະນາ ແລະ ປັບປຸງນະໂຍບາຍ

**3. ຍົກລະດັບວຽກງານວິຊາການ ແລະ ການຊອກຫາແຫຼ່ງທຶນ**

- ການເຮັດບົດຄົ້ນຄວ້າວິໃຈ ເພື່ອ ປະກອບສ່ວນແກ່ບົດລາຍງານແຫ່ງຊາດ ແລະ ການສະໜັບສະໜູນດ້ານນະໂຍບາຍ
- ສ້າງເວທີສົນທະນາ ຫຼາຍຝ່າຍ ເພື່ອການຊ່ວຍເຫຼືອທີ່ມີປະສິດທິພາບ ແລະ ຮ່ວມມືທີດີ
- ສົ່ງເສີມການເຂົ້າເຖິງແຫຼ່ງທຶນທີ່ຫຼາກຫຼາຍ ທັງພາຍໃນ ແລະ ຕ່າງປະເທດ



3 ມີສຸຂະພາບ & ຊີວິດການເປັນຢູ່ທີ່ດີ

## ກຸ່ມວິຊາການດ້ານ ສາທາລະນະສຸກ

- ສ້າງຄວາມສາມາດໃຫ້ອົງການຈັດຕັ້ງສັງຄົມລາວທີ່ປະຕິບັດວຽກງານ ສາທາລະນະສຸກ
- ເພີ່ມທະວີການຮ່ວມມືກັບຄູ່ຮ່ວມງານພາກລັດ ແລະ ອົງການຈັດຕັ້ງສາກົນ
- ຊຸກຍູ້ການສະໜັບສະໜູນທາງດ້ານນະໂຍບາຍ, ແຫຼ່ງທຶນ ແລະ ວິຊາການ



## ຈຸດປະສົງ

- ເພື່ອໃຫ້ອົງການຈັດຕັ້ງສັງຄົມລາວມີສ່ວນຮ່ວມໃນການຊຸກຍູ້, ຕິດຕາມ ແລະ ປະເມີນ ຜົນການຈັດຕັ້ງປະຕິບັດແຜນຍຸດທະສາດກະຊວງສາທາລະນະສຸກ;
- ເພື່ອຂໍການສະຫນັບສະຫນູນທາງດ້ານນະໂຍບາຍ, ດ້ານວິຊາການ ແລະ ງົບປະມານ ພາຍໃນ ແລະ ສາກົນ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ນະໂຍບາຍ ຂອງກະຊວງສາທາລະນະສຸກ
- ເພື່ອເປັນຕົວແທນອົງການຈັດຕັ້ງສັງຄົມລາວທີ່ເຄື່ອນໄຫວວຽກງານສາທາລະນະສຸກ



# ແຜນງານ

**1. ສ້າງຄວາມສາມາດໃຫ້ອົງການຈັດຕັ້ງສັງຄົມລາວທີ່ປະຕິບັດວຽກງານສາທາລະນະສຸກ**

- ສ້າງຄວາມສາມາດທາງດ້ານວິຊາການ ເປັນຕົ້ນແມ່ນການຄົ້ນຄວ້າ, ເກັບກຳຂໍ້ມູນ, ການວິເຄາະ-ວິໄຈຂໍ້ມູນ, ການບໍລິຫານໂຄງການສາທາລະນະສຸກ ແລະ ການສະ ຫຼຸບລາຍງານ ແລະ ການຕິດຕາມ-ປະເມີນຜົນວຽກງານສາທາລະນະສຸກ
- ສ້າງຄວາມສາມາດໃນການຂໍການສະໜັບສະໜູນທຶນຈັດຕັ້ງປະຕິບັດໂຄງການ, ການສະໜັບສະໜູນວິຊາການ ແລະ ການຊຸກຍູ້ທາງດ້ານນະໂຍບາຍ

**2. ເພີ່ມທະວີການຮ່ວມມືກັບຄູ່ຮ່ວມງານພາກລັດ ແລະ ອົງການຈັດຕັ້ງສາກົນ**

- ສ້າງກົນໄກການປະສານງານກັບອົງການຈັດຕັ້ງສັງຄົມລາວ, ພາກລັດ, ຄູ່ຮ່ວມງານ ແລະ ພາກສ່ວນທີ່ກ່ຽວຂ້ອງໃນວຽກງານສາທາລະນະສຸກ ແລະ ເຜີຍແຜ່ໃຫ້ຮັບຮູ້ ແລະ ປະຕິບັດເປັນເອກະພາບກັນ
- ສ້າງເວທີແລກປ່ຽນຂໍ້ມູນຂ່າວສານ, ບົດຮຽນ ແລະ ປະສົບການ ແລະ ວຽກງານນະ ໂຍບາຍສາທາລະນະສຸກຮ່ວມກັບອົງການຈັດຕັ້ງສັງຄົມລາວ, ພາກລັດ, ຄູ່ຮ່ວມ ງານ ແລະ ພາກສ່ວນທີ່ກ່ຽວຂ້ອງ

**3. ຊຸກຍູ້ການສະໜັບສະໜູນທາງດ້ານນະໂຍບາຍ, ແຫຼ່ງທຶນ ແລະ ວິຊາການ**

- ຈັດກອງປະຊຸມເຜີຍແຜ່ຜົນການສຳຫຼວດ, ການສຶກສາ ແລະ ການຄົ້ນຄວ້າ-ວິໄຈ ວຽກງານສາທາລະນະສຸກ ເພື່ອແລກປ່ຽນຮຽນຮູ້ ແລະ ຂໍການສະໜັບສະໜູນທາງ ດ້ານທຶນຮອນ ແລະ ວິຊາການ
- ຈັດກິດຈະກຳທັດສະນະສຶກສາ ແລະ ຢ້ຽມຢາມຜົນສຳເລັດຂອງອົງການຈັດຕັ້ງສັງ ຄົມລາວໃນຂະແໜງການສາທາລະນະສຸກ ຮ່ວມກັບພາກລັດ, ອົງການຈັດຕັ້ງສາ ກົນ ແລະ ພາກສ່ວນທີ່ກ່ຽວຂ້ອງ
- ຮ່ວມຈັດ ແລະ ເຂົ້າຮ່ວມງານວາງສະແດງຜົນງານຂອງອົງການຈັດຕັ້ງສັງຄົມລາວ ໃນເວທີທ້ອງຖິ່ນ, ລະດັບຊາດ ແລະ ສາກົນ

**4. ການພັດທະນາດ້ານວິຊາການ ແລະ ການຊອກຫາແຫຼ່ງທຶນ**

- ອົງການຈັດຕັ້ງສັງຄົມລາວໃນຂະແໜງສາທາລະນາສຸກປຶກສາຫາລື ແລະ ຮ່ວມໃຈ ກັນຂຽນບົດສະເໜີໂຄງການພັດທະນາວຽກງານສາທາລະນະສຸກ
- ສ້າງເວທີແລກປ່ຽນວິຊາການລະຫວ່າງວິຊາການຂະແໜງການສາທາລະນະສຸກ
- ຊອກຫາແຫລ່ງທຶນສະໜັບສະໜູນວຽກງານສາທາລະນະສຸກ ລວມທັງການເຜີຍ ແຜ່ນະໂຍບາຍການສະໜັບສະໜູນທຶນຂອງຜູ້ໃຫ້ທຶນ.

3 Good Health and Well-Being



10 ຫຼຸດຜ່ອນ ຄວາມບໍ່ສະເໝີພາບ

## ກຸ່ມວິຊາການດ້ານ ແຮງງານ, ຄວາມພິການ ແລະ ການປົກປ້ອງທາງສັງຄົມ

- ຮ່ວມມືປະສານງານກັບພາກລັດ ແລະ ອົງການຈັດຕັ້ງທີ່ເຮັດວຽກດ້ານແຮງງານ, ຄົນພິການ ແລະ ການປົກປ້ອງສັງຄົມ
- ປະກອບສ່ວນຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນພັດທະນາທາງດ້ານແຮງງານ, ຄົນພິການ ແລະ ການປົກປ້ອງສັງຄົມ, ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ອົງການຈັດຕັ້ງສັງຄົມສາມາດເຂົ້າເຖິງ ແຫຼ່ງທຶນ ແລະ ການສະໜັບສະໜູນທາງດ້ານວິຊາການເພື່ອຄວາມຍືນຍົງ
- ປະກອບສ່ວນເພື່ອປົກປ້ອງສິດ, ຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຄົນພິການ



## ຈຸດປະສົງ

- ເພື່ອຕາງໜ້າໃຫ້ອົງການຈັດຕັ້ງສັງຄົມປະສານງານກັບອົງການຈັດຕັ້ງທີ່ເຮັດວຽກກ່ຽວ ຂ້ອງກັບວຽກງານດ້ານແຮງງານ, ຄົນພິການ ແລະ ວຽກງານປົກປ້ອງທາງສັງຄົມ.
- ເພື່ອອຳນວຍຄວາມສະດວກໃຫ້ອົງການຈັດຕັ້ງສັງຄົມລາວໃນການຈັດຕັ້ງປະຕິບັດ ແຜນພັດທະນາທາງດ້ານແຮງງານ, ຄວາມພິການ ແລະ ການປົກປ້ອງສັງຄົມ
- ເພື່ອສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ອົງການຈັດຕັ້ງສັງຄົມລາວ ສາ ມາດເຂົ້າເຖິງແຫຼ່ງທຶນ ແລະ ການສະໜັບສະໜູນທາງດ້ານວິຊາການ ແລະ ຍືນຍົງ.



# ແຜນງານ

1. **ຮ່ວມມື ແລະ ປະສານງານກັບພາກລັດ ແລະ ອົງການຈັດຕັ້ງທີ່ເຮັດວຽກດ້ານແຮງງານ, ຄົນພິການ ແລະ ການປົກປ້ອງສັງຄົມ**

- ເຂົ້າຮ່ວມກອງປະຊຸມສຳຄັນຂອງພາກລັດ, ກອງປະຊຸມແລກປ່ຽນບົດຮຽນ, ປະ ສົບການ ແລະ ວິຊາການກັບອົງການຈັດຕັ້ງຂອງລັດ ແລະ ສາກົນ ຕິດພັນກັບ ວຽກງານແຮງງານ, ຄົນພິການ ແລະ ການປົກປ້ອງສັງຄົມ
- ປະສານງານກັບອົງການຈັດຕັ້ງຄົນພິການ, ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບແຮງງານນອກ ລະບົບ ແລະ ຄົນທີ່ມີຄວາມເປັນພິການ ເພື່ອໃຫ້ໄດ້ຮັບການປົກປ້ອງໃນສັງຄົມ
- ເກັບກຳຂໍ້ມູນສະຖິຕິກ່ຽວກັບແຮງງານນອກລະບົບ ແລະ ຄົນພິການ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ສັງຄົມໄດ້ຮັບຮູ້
- ສ້າງຄວາມອາດສາມາດໃຫ້ແກ່ ອົງການຈັດຕັ້ງສັງຄົມລາວທີ່ເຮັດວຽກກ່ຽວກັບກົດ ໝາຍແຮງງານເພື່ອຮັບປະກັນການເປັນຈຸດປະສານງານທີ່ມີປະສິດທິພາບ ປະສິດທິຜົນ

2. **ປະກອບສ່ວນຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນພັດທະນາ ທາງດ້ານແຮງງານ, ຄົນພິການ ແລະ ການປົກປ້ອງສັງຄົມ**

- ຝຶກອົບຮົມ ແລະ ເຜີຍແຜ່ນິຕິກຳໃຫ້ແກ່ອົງການຈັດຕັ້ງສັງຄົມລາວ ແລະ ຊຸມຊົນ ກ່ຽວກັບແຮງງານນອກລະບົບ, ຄົນພິການ ແລະ ການປົກປ້ອງສັງຄົມ
- ສ້າງວຽກເຮັດງານທຳ ແລະ ສະໜອງການບໍລິການ ແລະ ຈັດການດ້ານແຮງງານ ນອກລະບົບໃຫ້ແກ່ຄົນທີ່ມີຄວາມເປັນພິການ ແລະ ບໍ່ເປັນຄົນພິການ
- ສຳຫຼວດເກັບກຳຂໍ້ມູນ, ວິເຄາະຂໍ້ມູນ ກ່ຽວກັບແຮງງານ, ຄົນພິການ ແລະ ວຽກງານການປົກປ້ອງສັງຄົມ ພ້ອມທັງຈັດກອງປະຊຸມ ເພື່ອນຳສະເໜີຂໍ້ມູນ ໃຫ້ພາກລັດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ
- ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງສ້າງນິຕິກຳເພື່ອເຮັດໃຫ້ກົດໝາຍວ່າດ້ວຍຄົນພິການໄດ້ຮັບການຈັດຕັ້ງປະຕິບັດ ແລະ ບັງຂັບໃຊ້ທົ່ວປະເທດ

3. **ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ອົງການຈັດຕັ້ງສັງຄົມສາມາດເຂົ້າເຖິງແຫຼ່ງທຶນ ແລະ ການສະໜັບສະໜູນທາງດ້ານວິຊາການເພື່ອຄວາມຍືນຍົງ**

- ຈັດກອງປະຊຸມປຶກສາຫາລື ແລະ ສ້າງແຜນຊອກຫາແຫຼ່ງທຶນເພື່ອສະໜັບສະໜູນ ກິດຈະກຳຂອງອົງການຈັດຕັ້ງສັງຄົມລາວທີ່ເຄື່ອນໄຫວວຽກງານແຮງງານ, ຄົນພິການ ແລະ ການປົກປ້ອງສັງຄົມ
- ຈັດກອງປະຊຸມທົບທວນຄືນກັບກຸ່ມທີ່ເຮັດວຽກແຮງງານທີ່ເຮັດວຽກກ່ຽວກັບແຮງ ງານສະເພາະ ເພື່ອສັງລວມຜົນໄດ້ຮັບ ແລະ ບັນດາຂໍ້ຄົງຄ້າງ, ວາງແຜນ ແລະ ປະເມີນຄວາມອາດສາມາດຂອງກຸ່ມແຮງງານທີ່ຈະຮັບທຶນ

4. **ສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງສັງຄົມລາວໃຫ້ເຂົ້າໃຈວຽກງານແຮງງານ, ຄົນພິການ ແລະ ປົກປ້ອງທາງສັງຄົມ**

- ຈັດຝຶກອົບຮົມທັກສະການສື່ສານ, ການພັດທະນາສີມືແຮງງານ, ກົດໝາຍແຮງ ງານ, ສິດທິພື້ນຖານຄົນພິການ, ການປົກປ້ອງສັງຄົມ ໃຫ້ອົງການຈັດຕັ້ງສັງຄົມ ລາວ
- ສ້າງເວທີແລກປ່ຽນຂໍ້ມູນຂ່າວສານ ແລະ ໂຄສະນາເຜີຍແຜ່ບັນດານິຕິກຳທີ່ກ່ຽວ ຂ້ອງກັບສິດ ແລະ ໜ້າທີ່ຂອງຄົນພິການ;
- ຝຶກອົບຮົມສ້າງຄວາມອາດສາມາດໃຫ້ມີນັກວິທະຍາກອນໃນການເຜີຍແຜ່ກົດ ໝາຍວ່າດ້ວຍຄົນພິການ
- ຈັດກອງປະຊຸມເຜີຍແຜ່ແຜນຍຸດທະສາດການປົກປ້ອງທາງສັງຄົມ ເຊັ່ນກົດໝາຍ ປະກັນສັງຄົມ, ປະກັນສຸຂະພາບ, ສະຫວັດດີການສັງຄົມໃຫ້ຜູ້ອອກແຮງງານທຸກ ພາກສ່ວນເຂົ້າໃຈ ແລະ ເຂົ້າເຖິງ

5. **ປະກອບສ່ວນເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຄົນພິການ**

- ສ້າງກິດຈະກຳຜັນຂະຫຍາຍ ແລະ ເຜີຍແຜ່ດ້ານນະໂຍບາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບແຮງງານ, ຄົນພິການ ແລະ ການປົກປ້ອງສັງຄົມ.
- ຈັດງານສະເລີມສະລອງວັນກຳມະກອນ, ກິດຈະກຳວັນຄົນພິການແຫ່ງຊາດ, ແລະ ສາກົນ
- ສົ່ງເສີມຜູ້ອອກແຮງງານໄດ້ເຂົ້າເຖິງຂະບວນການຍຸຕິທຳໃນກົດໝາຍແຮງງານ
- ຈັດກອງປະຊຸມປຶກສາຫາລືກັບພາກລັດ, ອົງການຈັດຕັ້ງສັງຄົມລາວ, ຄູ່ຮ່ວມພັດ ທະນາ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອສະຫຼຸບລາຍງານ ແລະ ວາງແຜນ ທິດທາງໃນທານຮ່ວມມື.



8 ມີວຽກເຮັດງານທຳທີ່ມີ
ຄຸນຄ່າ & ເສດຖະກິດ
ມີການເຕີບໂຕ

## ກຸ່ມວິຊາການດ້ານ ເສດຖະກິດ, ວັດທະນະທຳ ແລະ ສັງຄົມ

- ຮ່ວມມື ແລະ ປະສານງານກັບອົງການຈັດຕັ້ງສັງຄົມລາວທີ່ເຄື່ອນໄຫວວຽກງານເສດຖະກິດ ແລະ ວັດທະນະທຳ-ສັງຄົມ
- ອຳນວຍຄວາມສະດວກໃນການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການສະໜັບສະໜູນ
- ສົ່ງເສີມການຕະຫຼາດຜະລິດຕະພັນຊຸມຊົນ, ຊຸກຍູ້, ສົ່ງເສີມ, ປົກປ້ອງຊັບສິນທາງປັນຍາ ແລະ ຜະລິດຕະພັນລາວ




## ຈຸດປະສົງ

- ເພື່ອເປັນຈຸດປະສານງານໃຫ້ອົງການຈັດຕັ້ງສັງຄົມລາວທີ່ສົ່ງເສີມເສດຖະກິດ ແລະ ວັດຖະນະທຳ-ສັງຄົມ
- ອຳນວຍຄວາມສະດວກໃຫ້ອົງການຈັດຕັ້ງສັງຄົມລາວ ໃນການຈັດຕັ້ງປະຕິບັດແຜນດຳເນີນງານ ແລະ ປະກອບສ່ວນເຂົ້າໃນການຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ
- ເພື່ອສົ່ງເສີມອົງການຈັດຕັ້ງສັງຄົມລາວດ້ານການຕະຫຼາດ, ການໂຄສະນາຜະລິດຕະ ພັນຂອງຊາວບ້ານ, ກຸ່ມຜະລິດຂັ້ນທ້ອງຖິ່ນ ແລະ ລະດັບຊາດ ພ້ອມທັງການຈັດງານວາງສະແດງຜະລິດຕະພັນຊາວບ້ານ ແລະ ຜົນງານຈາກການສະໜັບສະໜູນຂອງບັນດາອົງການຈັດຕັ້ງສັງຄົມລາວ.



# ແຜນງານ

**1. ຮ່ວມມື ແລະ ປະສານງານກັບອົງການຈັດຕັ້ງສັງຄົມລາວທີ່ເຄື່ອນໄຫວ ວຽກງານເສດ ຖະກິດ ແລະ ວັດຖະນະທຳ-ສັງຄົມ**

- ສຳຫຼວດ ແລະ ເກັບກຳຂໍ້ມູນອົງການຈັດຕັ້ງສັງຄົມລາວທີ່ເຄື່ອນໄຫວວຽກງານສົ່ງ ເສີມກາ ຜະລິດຊຸມຊົນ, ການພັດທະນາເສດຖະກິດທ້ອງຖິ່ນ ແລະ ວັດຖະນະທຳ-ສັງຄົມ
- ຈັດກອງປະຊຸມປຶກສາຫາລືການສົ່ງເສີມຜະລິດຕະພັນທ້ອງຖິ່ນ ໃຫ້ເຂົ້າເຖິງແຫຼ່ງ ທຶນ, ການສະໜັບສະໜູນດ້ານວິຊາການ ແລະ ເຂົ້າເຖິງຕະຫຼາດ
- ຈັດງານວາງສະແດງຜະລິດຕະພັນຊາວບ້ານ

**2. ອຳນວຍຄວາມສະດວກໃນການເຂົ້າເຖິງຂໍ້ມູນຂ່າວສານແລະການ ສະໜັບສະໜູນ**

- ອຳນວຍຄວາມສະດວກໃຫ້ອົງການຈັດຕັ້ງສັງຄົມລາວໄດ້ເຂົ້າເຖິງແຫຼ່ງທຶນ, ມີໂອ ກາດໃນການແລກປ່ຽນຮຽນຮູ້ ລວມທັງໃຫ້ນຳສິນຄ້າໄປວາງຂາຍ
- ອຳນວຍຄວາມສະດວກໃນການຝຶກອົບຮົມໃນຫົວຂໍ້ການຕະຫຼາດ ຫຼື ການເປັນ ຜູ້ປະກອບການ ແລະ ການຄຸ້ມຄອງຄຸນນະພາບຂອງຜະລິດຕະພັນ

**3. ສົ່ງເສີມການຕະຫຼາດຜະລິດຕະພັນຊຸມຊົນ**

- ຈັດງານວາງສະແດງຜະລິດຕະພັນ ແລະ ຜົນງານການສະໜັບສະໜູນຊຸມຊົນ ຂອງອົງການຈັດຕັ້ງສັງຄົມລາວ
- ສ້າງສູນວາງສະແດງສິນຄ້າ ແລະ ຜະລິດຕະພັນຊາວບ້ານແບບຖາວອນ
- ເຂົ້າຮ່ວມເວທີລະດັບຊາດ ແລະ ເວທີສາກົນ ເພື່ອເຈລະຈາການຊື້-ຂາຍຜະລິດ ຕະພັນຂອງຊຸມຊົນ ແລະ ເປັນເຄືອຂ່າຍກັບຕະຫຼາດພາຍໃນ ແລະ ຕ່າງປະເທດ

**4. ຊຸກຍູ້, ສົ່ງເສີມ ແລະ ປົກປ້ອງຊັບສິນທາງປັນຍາ ແລະ ຜະລິດຕະພັນລາວ**

- ·ສຶກສາ ແລະ ເກັບກຳຂໍ້ມູນ ເພື່ອສ້າງຄູ່ມືພື້ນຖານການໃຫ້ຄວາມຮູ້ການຂຶ້ນທະ ບຽນຊັບສິນທາງປັນຍາ ແລະ ຝຶກອົບຮົມ ເຜີຍແຜ່ຄູ່ມື
- ປະສານກັບພາກສ່ວນຊັບສິນທາງປັນຍາເພື່ອແລກປ່ຽນຮຽນຮູ້ ແລະ ຂໍການຊ່ວຍ ເຫຼືອທາງດ້ານວິຊາການ.




# ກຸ່ມວິຊາການດ້ານ ສິ່ງແວດລ້ອມ

- ສ້າງຂີດຄວາມສາມາດໃຫ້ CSO ມີສ່ວນຮ່ວມເຂົ້າໃນວຽກໄພພິບັດຫຼາຍຂຶ້ນເຊັ່ນ ການກະຈາຍຂໍ້ມູນຂ່າວສານ, ກຽມຄວາມພ້ອມຮັບມື ແລະ ແກ້ໄຂ
- ສົ່ງເສີມການເຮັດກະສິກຳອິນຊີ, CSO ເຮັດການບົດຄົ້ນຄວ້າ, ການສຶກສາ, ສົນທະນາ ແລກປ່ຽນບົດຮຽນ
- ຫຼຸດຜ່ອນບັນຫາຂີ້ເຫຍື້ອ, ພາສຕິກ ແລະ ການນຳໃຊ້ສານເຄມີເຂົ້າໃນການເຮັດກະສິກຳ



# ຈຸດປະສົງ

- ຊຸກຍູ້ສົ່ງເສີມ ການຄຸ້ມຄອງ ແລະນຳໃຊ້ ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ
- ສົມທົບກັບກຸ່ມກະສິກຳ - ປ່າໄມ້ ແລະພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອປົກປັກຮັກສາເນື້ອທີ່ປ່າໄມ້ ບໍ່ໃຫ້ ຫຼຸດ 70% ຂອງເນື້ອທີ່ທັງໝົດໃນ ປີ 2025,
- ສົ່ງເສີມ ການພັດທະນາແລະເຕີບໂຕຂອງເສດຖະກິດ ຕາມຍຸດທະສາດສີຂຽວ
- ປະກອບສ່ວນສ້າງ ສະພາບແວດລ້ອມທີ່ດີ ໃນຕົວເມືອງແລະ ຊົນນະບົດ, ປະສະຈາກ ມົນລະພິດຕ່າງໆ; ຜັນຂະຫຍາຍແນວຄິດ 3 Rs, ສ້າງມູນຄ່າເພີ່ມ ໃຫ້ສິ່ງເສດເຫຼືອໃນຕົວເມືອງໃຫຍ່.



# ແຜນງານ

1. **ການປົກປັກຮັກສາ, ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມການພັດທະນາເສດຖະກິດ-ສັງຄົມ**

- ພັດທະນາບຸກຄະລາກອນ, ອົງການຈັດຕັ້ງສັງຄົມ ແລະ ສະຖາບັນການສຶກສາ ແລະ ວິໄຈດ້ານສິ່ງແວດລ້ອມ
- ເພີ່ມຂີດຄວາມສາມາດໃຫ້ແກ່ອົງການຈັດຕັ້ງສັງຄົມມີສ່ວນຮ່ວມຄຸ້ມຄອງໄພພິບັດແຫ່ງຊາດ
- ມີສ່ວນຮ່ວມໃນການພັດທະນານິຕິກຳທີ່ກ່ຽວຂ້ອງກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ
- ໃຫ້ການສະໜັບສະໜູນ ແລະ ສົ່ງເສີມ ນະໂຍບາຍ, ແຜນງານ, ໂຄງການ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວທີ່ໃນຍຸດທະສາດ ແລະ ແຜນພັດທະນາຂອງຂະແໜງການແລະທ້ອງຖິ່ນ ຫຼື ເປັນນະໂຍບາຍ, ແຜນງານ, ໂຄງການ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ ທີ່ຂະແໜງການ ແລະ ທ້ອງຖິ່ນຍອມຮັບ ແລະ ພ້ອມທີ່ຈະໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ

2. **ຍົກສູງປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນຳ ໃຊ້ຊັບພະຍາກອນທຳມະຊາດ**

- ຫຼຸດຜ່ອນມົນລະພິດ, ສິ່ງເສດເຫຼືອ ແລະ ທາດອາຍພິດ ເຮືອນແກ້ວ
- ຫຼຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງ ຕໍ່ໄພພິບັດ
- ເພີ່ມຄວາມຮັບຮູ້, ເຂົ້າໃຈ ແລະ ຂີດຄວາມສາມາດຂອງພະນັກງານ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ກັບການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ, ໂດຍສະເພາະຈະສຸມໃສ່ ຈຸດປະສານງານ/ຫ້ອງການປະ ສານງານຂອງຄະນະຄຸ້ມຄອງໄພພິບັດແຫ່ງຊາດ, ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ກົມຄຸ້ມຄອງໄພພິບັດ ແລະ ການ ຽນແປງສະພາບດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

15 Life on Land



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Co-funded by the European Union

Implemented by

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

020 56 360 636 www.laocso.org laocso.secretariat@gmail.com